ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ເລກທີ 260 /ຈນວ
ລົງວັນທີ 14.3.2025

# ຂໍ້ຕົກລົງ
# ວ່າດ້ວຍກອງທຶນຄຸ້ມຄອງໄພພິບັດ ນະຄອນຫຼວງວຽງຈັນ

- ອີງຕາມ ມາດຕາ 19 ມາດຕາ 20 ໝວດທີ IV ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ຂອງ ເຈົ້າແຂວງ,ເຈົ້າຄອງນະຄອນຫຼວງ ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງໄພພິບັດ ສະບັບເລກທີ 71/ສພຊ, ລົງວັນທີ 24 ມິຖຸນາ 2019;
- ອີງຕາມ ດຳລັດວ່າດ້ວຍກອງທຶນຄຸ້ມຄອງໄພພິບັດ ສະບັບເລກທີ 631/ລບ, ລົງວັນທີ 24 ທັນວາ 2020;
- ອີງຕາມ ມະຕິກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາປະຊາຊົນ ນະຄອນຫຼວງວຽງຈັນ ຊຸດທີ II ວ່າດ້ວຍການຮັບຮອງເອົາ ຂໍ້ຕົກລົງຂອງເຈົ້າຄອງນະຄອນຫຼວງວຽງຈັນ ວ່າດ້ວຍກອງທຶນຄຸ້ມຄອງໄພພິບັດ ນະຄອນຫຼວງວຽງຈັນ ສະບັບເລກທີ 015/ສປນວ, ລົງວັນທີ 30/01/2025;

## ເຈົ້າຄອງນະຄອນຫຼວງວຽງຈັນ ຕົກລົງ:
## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງ ແລະ ການນຳໃຊ້ກອງທຶນຄຸ້ມຄອງໄພພິບັດ, ການລະດົມທຶນ ແລະ ສົມທົບທຶນ ຈາກທຸກພາກສ່ວນຂອງລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຊ່ວຍເຫຼືອບັນເທົາທຸກສຸກເສີນ, ການສ້ອມແປງໂຄງລ່າງພື້ນຖານທີ່ສຸກເສີນ, ການຊອກຄົ້ນ, ຄົ້ນຫາ ແລະ ກູ້ໄພ, ແນໃສ່ຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນຜູ້ປະສົບໄພພິບັດ ໃຫ້ກັບຄືນສູ່ສະພາບປົກກະຕິ ຫຼື ດີຂຶ້ນກວ່າເກົ່າປະກອບສ່ວນໃນການປົກປັກຮັກສາ ແລະ ສ້າງນະຄອນຫຼວງວຽງຈັນ.

**ມາດຕາ 2 ນິຍາມ**

ກອງທຶນຄຸ້ມຄອງໄພພິບັດ ນະຄອນຫຼວງວຽງຈັນ ແມ່ນກອງທຶນຂອງອົງການປົກຄອງນະຄອນຫຼວງວຽງຈັນ ຂຽນຫຍໍ້ວ່າ: "ກຄພນວ" ທີ່ສ້າງຕັ້ງຂຶ້ນ ເພື່ອລະດົມທຶນ, ສະສົມທຶນ ແລະ ວັດຖຸອຸປະກອນຈາກທຸກພາກສ່ວນ ທັງພາຍໃນ ແລະ ຕ່າງປະເທດ, ແນໃສ່ຮັບປະກັນ ໃຫ້ມີງົບປະມານ ແລະ ວັດຖຸອຸປະກອນຮັບໃຊ້ ເຂົ້າໃນການຄຸ້ມຄອງໄພພິບັດ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ກອງທຶນ ໝາຍເຖິງ:** ເງິນ ຫຼື ວັດຖຸ ທີ່ໄດ້ມາຈາກງົບປະມານຂອງລັດ, ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງທຸກພາກສ່ວນ ທັງພາຍໃນ ແລະ ຕ່າງປະເທດ;
2. **ໄພພິບັດ ໝາຍເຖິງ:** ເຫດການທີ່ເປັນອັນຕະລາຍຮ້າຍແຮງ ທີ່ເກີດຈາກໄພທຳມະຊາດ ຫຼື ມະນຸດສ້າງຂຶ້ນເຊັ່ນ: ອັກຄີໄພ, ອຸທົກກະໄພ, ວາຕະໄພ, ໄພແຫ້ງແລ້ງ, ສັດຕູພືດ, ພະຍາດລະບາດ, ອາກາດໜາວໝາກເຫັບຕົກ, ດິນເຈື່ອນ, ແຜ່ນດິນໄຫວ, ສານເຄມີຮົ່ວໄຫຼ, ມົນລະພິດທາງນ້ຳ, ທາງອາກາດ ແລະ ອື່ນໆ. ເຊິ່ງໄດ້ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍຕໍ່ສຸຂະພາບ, ຊີວິດ, ຊັບສິນ, ເສດຖະກິດ ແລະ ການດຳລົງຊີວິດຂອງຄົນໃນສັງຄົມ ທັງໃນໄລຍະສັ້ນ ແລະ ໄລຍະຍາວ;
3. **ການຊ່ວຍເຫຼືອສຸກເສີນ ໝາຍເຖິງ:** ການໃຫ້ການຊ່ວຍເຫຼືອອັນຮີບດ່ວນ ທັນທີໃຫ້ຜູ້ກຳລັງປະສົບໄພ;
4. **ການສ້ອມແປງໂຄງລ່າງພື້ນຖານທີ່ສຸກເສີນ ໝາຍເຖິງ:**ການສ້ອມແປງເສັ້ນທາງ, ຂົວ, ໄຟຟ້າ, ຊົນລະປະທານ, ປະຕູນ້ຳ, ໂທລະຄົມມະນາຄົມ, ໂຮງໝໍ ແລະ ອື່ນໆ ຢູ່ສະຖານທີ່ເກີດໄພພິບັດ ເພື່ອໃຫ້ສາມາດເຂົ້າເຖິງການກອບກູ້ເອົາຊີວິດ ແລະ ຊັບສິນຂອງພົນລະເມືອງ ພ້ອມທັງປ້ອງກັນບ່ອນເກີດໄພພິບັດບໍ່ໃຫ້ເກີດຄວາມເສຍຫາຍທີ່ໃຫ່ຍຫຼວງ.
5. **ຜູ້ປະສົບໄພ ໝາຍເຖິງ:** ບຸກຄົນ ແລະ ນິຕິບຸກຄົນ, ທີ່ໄດ້ຮັບຜົນກະທົບ ແລະ ໄດ້ຮັບຄວາມເສຍຫາຍຈາກໄພພິບັດ.
6. **ອຸທົກກະໄພ ໝາຍເຖິງ:** ໄພອັນຕະລາຍທີ່ຮ້າຍແຮງທີ່ເກີດມາຈາກຝົນຕົກໜັກຫຼາຍມື້ຕິດຕໍ່ກັນພາໃຫ້ເກີດມີນ້ຳຖ້ວມຂັງ, ນ້ຳປ່າໄຫຼແຮງ ທີ່ສ້າງຜົນເສຍຫາຍຕໍ່ຊັບສິນຂອງປະຊາຊົນ.
7. **ວາຕະໄພ ໝາຍເຖິງ:** ປະກົດການທີ່ເກີດຂຶ້ນມາຈາກທຳມະຊາດ ເຊັ່ນ: ຟ້າຮ້ອງຟ້າຜ່າ, ລົມພະຍຸພັດແຮງ ສ້າງຄວາມເສຍຫາຍຕໍ່ກັບເຮືອນຊານ, ສັດລ້ຽງ ແລະ ເຄື່ອງປູກຝັງ ຂອງປະຊາຊົນ.

**ມາດຕາ 4 ຫຼັກການຄຸ້ມຄອງ ແລະ ບໍລິຫານ ກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ**

ການຄຸ້ມຄອງ ແລະ ບໍລິຫານກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບນະໂຍບາຍ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຢ່າງເຂັ້ມງວດ;
2. ຮັບປະກັນການນຳໃຊ້ເງິນກອງທຶນໃຫ້ຖືກຕ້ອງຕາມເປົ້າໝາຍ, ປະຢັດ, ມີປະສິດທິພາບ ແລະ ມີປະສິດທິຜົນ;
3. ມີລະບົບຈັດຮັບ-ຈັດຈ່າຍ ໂດຍການບັນທຶກລາຍຮັບ-ລາຍຈ່າຍທີ່ຊັດເຈນ ຜ່ານລະບົບເງິນຝາກຢູ່ຄັງເງິນແຫ່ງຊາດ ປະຈຳນະຄອນຫຼວງວຽງຈັນ;
4. ມີຄວາມຄ່ອງຕົວ, ວ່ອງໄວ, ຍຸຕິທຳ, ໂປ່ງໃສ, ສາມາດກວດສອບໄດ້;
5. ຕິດຕາມ, ກວດກາ ແລະ ສະຫຼຸບລາຍງານຢ່າງເປັນປົກກະຕິ ຕາມກົດໝາຍ ແລະ ຕາມລະບຽບການ.

**ມາດຕາ 5 ນະໂຍບາຍກ່ຽວກັບ ກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ**

1. ນະຄອນຫຼວງວຽງຈັນຖືສຳຄັນວຽກງານຄຸ້ມຄອງໄພພິບັດ ດ້ວຍການວາງຍຸດທະສາດ, ມາດຕະການ, ແຜນດຳເນີນງານ, ໂຄງການ, ສຶກສາອົບຮົມ, ປຸກຈິດສຳນຶກ, ປະກອບບຸກຄະລາກອນ, ສະໜອງຂໍ້ມູນຂ່າວສານ, ງົບປະມານ, ອຸປະກອນ, ພາຫະນະ ແລະ ລະດົມການຊ່ວຍເຫຼືອ ເພື່ອໃຫ້ການຈັດຕັ້ງທີ່ກ່ຽວຂ້ອງໄດ້ເຄື່ອນໄຫວວຽກງານຢ່າງມີປະສິດທິພາບ ແລະ ມີປະສິດທິຜົນ, ຮັບປະກັນຄວາມສະ ⁎

ຫຼຸດຜ່ອນຄວາມປອດໄພ, ຫຼຸດຜ່ອນຄວາມສ່ຽງຕໍ່ຊີວິດ, ສຸຂະພາບ, ຊັບສິນ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ໃນນະຄອນຫຼວງວຽງຈັນ;

2. ນະຄອນຫຼວງວຽງຈັນ ຊຸກຍູ້ປຸກລະດົມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນດ້ານທຶນຮອນ, ເຕັກນິກວິຊາການ, ອຸປະກອນ, ພາຫະນະ, ວັດຖຸປັດໃຈ, ເຫື່ອແຮງ ແລະ ສະຕິປັນຍາເຂົ້າໃນວຽກງານຄຸ້ມຄອງໄພພິບັດ;
3. ຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂ ອຳນວຍຄວາມສະດວກໃຫ້ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ປະກອບສ່ວນທຶນເຂົ້າໃນກອງທຶນຄຸ້ມຄອງໄພພິບັດ ນະຄອນຫຼວງວຽງຈັນ ຕາມລະບຽບການ;
4. ນະຄອນຫຼວງວຽງຈັນ ເອົາໃຈໃສ່ພັດທະນາບຸກຄະລາກອນ, ປັບປຸງ ແລະ ກໍ່ສ້າງໂຄງລ່າງພື້ນຖານທີ່ຈຳເປັນ, ຄົ້ນຄ້ວາ ແລະ ຖ່າຍທອດຄວາມຮູ້, ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ ແລະ ເປັນມິດກັບສິ່ງແວດລ້ອມ ພ້ອມທັງນຳໃຊ້ພູມປັນຍາທ້ອງຖິ່ນເຂົ້າໃນການປ້ອງກັນ ແລະ ຄຸ້ມຄອງໄພພິບັດ ຢູ່ໃນນະຄອນຫຼວງວຽງຈັນ;

**ມາດຕາ 6 ຂອບເຂດການນຳໃຊ້ ກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ ຢູ່ໃນນະຄອນຫຼວງວຽງຈັນ

## ໝວດທີ 2
## ແຫຼ່ງລາຍຮັບ ແລະ ການນຳໃຊ້ ກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ

**ມາດຕາ 7 ແຫຼ່ງລາຍຮັບຂອງ ກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ**

ແຫຼ່ງລາຍຮັບຂອງກອງທຶນຄຸ້ມຄອງໄພພິບັດ ນະຄອນຫຼວງວຽງຈັນ ຕົ້ນຕໍ ມີດັ່ງນີ້:

1. ຈາກການຈັດສັນງົບປະມານປົກກະຕິປະຈຳປີ, ຈາກລາຍຮັບເງິນເກີນແຜນ ໃນແຕ່ລະປີ ຂອງນະຄອນຫຼວງວຽງຈັນ ຕາມການຕົກລົງຂອງອົງການປົກ ຄອງນະຄອນຫຼວງວຽງຈັນ.
2. ການປະກອບສ່ວນດ້ວຍຄວາມສະໝັກໃຈຂອງບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງທຸກພາກສ່ວນທັງພາຍໃນ ແລະ ຕ່າງປະເທດ;
3. ການລະດົມທຶນຈາກທຸກພາກສ່ວນການຈັດຕັ້ງ, ຫົວໜ່ວຍທຸລະກິດຜູ້ປະກອບການໂຮງຈັກໂຮງງານ ແລະ ສັງຄົມ;
4. ການປະກອບສ່ວນທຶນຈາກການຈັດກິດຈະກຳຕ່າງໆ;
5. ດອກເບ້ຍເງິນຝາກຈາກ ການເປີດບັນຊີຢູ່ທະນາຄານທຸລະກິດໃດໜຶ່ງທີ່ເຊື່ອຖືໄດ້ ຕາມທີ່ໄດ້ກຳນົດໄວ້ໃນ ຕາມມາດຕາ 17 ຂອງດຳລັດວ່າດ້ວຍກອງທຶນຄຸ້ມຄອງໄພພິບັດ ສະບັບເລກທີ 631/ລບ, ລົງວັນທີ 24 ທັນວາ 2020.
6. ລາຍຮັບຈາກແຫຼ່ງອື່ນໆ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 8 ເປົ້າໝາຍການນຳໃຊ້ເງິນ ກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ**

ເງິນກອງທຶນຄຸ້ມຄອງໄພພິບັດ ນະຄອນຫຼວງວຽງຈັນ ໃຫ້ນຳໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ການຊ່ວຍເຫຼືອສຸກເສີນ: ການກູ້ໄພ, ການຊອກຄົ້ນ, ຄົ້ນຫາຜູ້ທີ່ໄດ້ຮັບເຄາະຮ້າຍຈາກໄພພິບັດຕ່າງໆ ທີ່ຮ້າຍແຮງ, ຈັດສັນບ່ອນຢູ່ອາໄສຊົ່ວຄາວ, ເຄື່ອງນຸ່ງຫົ່ມ, ອາຫານ, ນ້ຳດື່ມ, ນ້ຳໃຊ້, ວິດຖ່າຍ, ການ

ບໍລິການແພດສຸກເສີນ ແລະ ຢາປິ່ນປົວພະຍາດ, ການສ້າງຕັ້ງສູນບັນຊາການສຸກເສີນຊົ່ວຄາວບ່ອນເກີດໄພພິບັດ, ສາງເກັບມ້ຽນເຄື່ອງຊ່ວຍເຫຼືອ, ການຍົກຍ້າຍປະຊາຊົນ ແລະ ຊັບສິນຂອງປະຊາຊົນ;

2. ການສ້ອມແປງໂຄງລ່າງພື້ນຖານສຸກເສີນສະຖານທີ່ເກີດໄພພິບັດ ເປັນຕົ້ນ: ຂົວ, ເສັ້ນທາງ, ໄຟຟ້າ, ນ້ຳປະປາ, ໂທລະຄົມມະນາຄົມ, ປະຕູນ້ຳ, ຊົນລະປະທານ, ໂຮງໝໍ, ໂຮງຮຽນ ທີ່ໄດ້ຮັບຜົນກະທົບ.
3. ການຈັດຊື້ວັດຖຸ, ອຸປະກອນຮັບໃຊ້ວຽກງານສຸກເສີນ, ການຈັດສົ່ງ ແລະ ແຈກຢາຍເຄື່ອງຊ່ວຍເຫຼືອບັນເທົາທຸກສຸກເສີນ;
4. ການລົງ, ຕິດຕາມ, ກວດກາ, ການປະເມີນຜົນເສຍຫາຍ ແລະ ຄວາມຕ້ອງການຮີບດ່ວນເບື້ອງຕົ້ນທີ່ຈຳເປັນ;
5. ການຈັດກອງປະຊຸມຂອງຄະນະກຳມະການປ້ອງກັນ ແລະ ຄຸ້ມຄອງໄພພິບັດ ນະຄອນຫຼວງວຽງຈັນ ເພື່ອແກ້ໄຂບັນຫາໄພພິບັດສຸກເສີນ;
6. ນຳໃຊ້ບໍລິຫານວຽກຂອງກອງທຶນຄຸ້ມຄອງໄພພິບັດ ນະຄອນຫຼວງວຽງຈັນ ຕາມການຕົກລົງເຫັນດີຂອງປະທານຄະນະກຳມະການປ້ອງກັນ ແລະ ຄຸ້ມຄອງໄພພິບັດ ນະຄອນຫຼວງວຽງຈັນ.

**ມາດຕາ 9 ການຖອນເງິນ ກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ**

1. ການຖອນເງິນອອກຈາກບັນຊີເງິນຝາກຂອງກອງທຶນຄຸ້ມຄອງໄພພິບັດ ນະຄອນຫຼວງວຽງຈັນ ຕ້ອງມີແຜນໃຊ້ຈ່າຍ ແລະ ມີການຕົກລົງອະນຸມັດຈາກປະທານຄະນະກຳມະການປ້ອງກັນ ແລະ ຄຸ້ມຄອງໄພພິບັດ ນະຄອນຫຼວງວຽງຈັນ ຫຼື ຜູ້ຖືກມອບສິດ;
2. ການຖອນເງິນ ຕ້ອງຖອນດ້ວຍແຊັກທະນາຄານ ຫຼື ແຊັກຂອງຄັງເງິນປະຈຳນະຄອນຫຼວງວຽງຈັນ ທີ່ມີສອງລາຍເຊັນຂອງຜູ້ທີ່ໄດ້ຮັບການມອບສິດ ຈຶ່ງສາມາດຖອນອອກໄດ້;
3. ການຖອນເງິນກອງທຶນຄຸ້ມຄອງໄພພິບັດ ນະຄອນຫຼວງວຽງຈັນ ແມ່ນບໍ່ສາມາດຖອນເງິນອອກຈາກບັນຊີໄດ້ທັງໝົດ ແລະ ຕ້ອງໃຫ້ມີເງິນແຮໄວ້ ສາມສິບສ່ວນຮ້ອຍຂອງຈຳນວນເງິນທັງໝົດຢູ່ໃນບັນຊີຂອງກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ.

**ມາດຕາ 10 ສິດໃນການສັ່ງຈ່າຍ**

ຜູ້ມີສິດສັ່ງຈ່າຍເງິນກອງທຶນຄຸ້ມຄອງໄພພິບັດ ນະຄອນຫຼວງວຽງຈັນ ແມ່ນປະທານຄະນະກຳມະການປ້ອງກັນ ແລະ ຄຸ້ມຄອງໄພພິບັດ ນະຄອນຫຼວງວຽງຈັນ ຫຼື ຜູ້ຖືກມອບສິດ.

## ໝວດທີ 3
## ຄະນະກຳມະການປ້ອງກັນ ແລະ ຄຸ້ມຄອງໄພພິບັດ

**ມາດຕາ 11 ຄະນະກຳມະການປ້ອງກັນ ແລະ ຄຸ້ມຄອງໄພພິບັດ ນະຄອນຫຼວງວຽງຈັນ**

ຄະນະກຳມະການປ້ອງກັນ ແລະ ຄຸ້ມຄອງໄພພິບັດ ຂັ້ນນະຄອນຫຼວງວຽງຈັນ ປະກອບດ້ວຍ:

1. ທ່ານ ຮອງເຈົ້າຄອງ ນະຄອນຫຼວງວຽງຈັນ, ຜູ້ຊີ້ນຳວຽກງານໃນຂົງເຂດວັດທະນະທຳ-ສັງຄົມ ເປັນປະທານ;
2. ທ່ານ ຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມ ນະຄອນຫຼວງວຽງຈັນ ເປັນຮອງປະທານ;
3. ທ່ານ ຮອງຫົວໜ້າກອງບັນຊາການທະຫານ ນະຄອນຫຼວງວຽງຈັນ ເປັນຮອງປະທານ;
4. ທ່ານ ຮອງຫົວໜ້າພະແນກການເງິນ ນະຄອນຫຼວງວຽງຈັນ ເປັນຮອງປະທານ;
5. ທ່ານ ຮອງຫົວໜ້າພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ ເປັນກຳມະການ;
6. ທ່ານ ຮອງປະທານອົງການກວດກາລັດ ນະຄອນຫຼວງວຽງຈັນ ເປັນກຳມະການ;
7. ທ່ານ ຮອງຫົວໜ້າຫ້ອງວ່າການ ນະຄອນຫຼວງວຽງຈັນ ເປັນກຳມະການ;

8. ທ່ານ ຮອງຫົວໜ້າກອງບັນຊາການ ປ້ອງກັນຄວາມສະຫງົບ ນະຄອນຫຼວງວຽງຈັນ ເປັນກໍາມະການ;
9. ທ່ານ ຮອງຫົວໜ້າພະແນກພາຍໃນ ນະຄອນຫຼວງວຽງຈັນ ເປັນກໍາມະການ;
10. ທ່ານ ຮອງຫົວໜ້າພະແນກສາທາລະນະສຸກ ນະຄອນຫຼວງວຽງຈັນ ເປັນກໍາມະການ;
11. ທ່ານ ຮອງຫົວໜ້າພະແນກກະສິກໍາ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ ເປັນກໍາມະການ;
12. ທ່ານ ຮອງຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ເປັນກໍາມະການ;
13. ທ່ານ ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງວຽງຈັນ ເປັນກໍາມະການ;
14. ທ່ານ ຮອງຫົວໜ້າພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ນະຄອນຫຼວງວຽງຈັນ ເປັນກໍາມະການ;
15. ທ່ານ ຮອງຫົວໜ້າພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ເປັນກໍາມະການ;
16. ທ່ານ ຮອງຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມ ນະຄອນຫຼວງວຽງຈັນ ເປັນກໍາມະການ;
17. ທ່ານ ຮອງເລຂາຄະນະບໍລິຫານງານຊາວໜຸ່ມ ນະຄອນຫຼວງວຽງຈັນ ເປັນກໍາມະການ;
18. ທ່ານ ຮອງປະທານສະຫະພັນກໍາມະບານ ນະຄອນຫຼວງວຽງຈັນ ເປັນກໍາມະການ;
19. ທ່ານ ຮອງປະທານສະຫະພັນແມ່ຍິງ ນະຄອນຫຼວງວຽງຈັນ ເປັນກໍາມະການ;
20. ທ່ານ ຮອງຫົວໜ້າຫ້ອງການຄຸ້ມຄອງ ແລະ ບໍລິຫານຕົວເມືອງນະຄອນຫຼວງວຽງຈັນ ເປັນກໍາມະການ;
21. ທ່ານ ຮອງຫົວໜ້າພະແນກພະລັງງານ ແລະ ບໍ່ແຮ່ ນະຄອນຫຼວງວຽງຈັນ ເປັນກໍາມະການ;
22. ທ່ານ ຮອງຫົວໜ້າພະແນກເຕັກໂນໂລຊີ ແລະ ການສື່ສານ ນະຄອນຫຼວງວຽງຈັນ ເປັນກໍາມະການ;
23. ທ່ານ ຜູ້ອໍານວຍການລັດວິສາຫະກິດນໍ້າປະປາ ນະຄອນຫຼວງວຽງຈັນ ເປັນກໍາມະການ;
24. ທ່ານ ຜູ້ອໍານວຍການລັດວິສາຫະກິດລົດເມ ນະຄອນຫຼວງວຽງຈັນ ເປັນກໍາມະການ;
25. ທ່ານ ຫົວໜ້າຝ່າຍປະຕິບັດການໄຟຟ້າ ນະຄອນຫຼວງວຽງຈັນ ເປັນກໍາມະການ;
26. ທ່ານ ຮອງເຈົ້າເມືອງ 09 ເມືອງ ໃນນະຄອນຫຼວງວຽງຈັນ ເປັນກໍາມະການ;

ຄະນະກໍາມະການປ້ອງກັນ ແລະ ຄຸ້ມຄອງໄພພິບັດ ຂັ້ນນະຄອນຫຼວງວຽງຈັນ ຖືກແຕ່ງຕັ້ງ ຫຼື ປົດຕໍາແໜ່ງ ໂດຍທ່ານເຈົ້າຄອງນະຄອນຫຼວງວຽງຈັນ ແລະ ມີຄວາມຮັບຜິດຊອບໂດຍກົງຕໍ່ຄະນະກໍາມະການຄຸ້ມຄອງໄພພິບັດຂັ້ນສູນກາງ ແລະ ເຈົ້າຄອງນະຄອນຫຼວງວຽງຈັນ.

**ມາດຕາ 12 ສິດ ຂອງຄະນະກໍາມະການປ້ອງກັນ ແລະ ຄຸ້ມຄອງໄພພິບັດ ນະຄອນຫຼວງວຽງຈັນ**

ຄະນະກໍາມະການປ້ອງກັນ ແລະ ຄຸ້ມຄອງໄພພິບັດ ຂັ້ນນະຄອນຫຼວງວຽງຈັນ ມີສິດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ນໍາສະເໜີຕໍ່ເຈົ້າຄອງນະຄອນຫຼວງວຽງຈັນ ໃນການກໍານົດປະກາດທ້ອງຖິ່ນ ຫຼື ເຂດໃດໜຶ່ງເປັນເຂດໄພພິບັດ;
2. ອອກຄໍາສັ່ງໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ກຽມພ້ອມປະຕິບັດໜ້າທີ່ ຢ່າງທັນການ ໃນກໍລະນີເກີດໄພພິບັດສຸກເສີນ;
3. ສັ່ງຈ່າຍເງິນກອງທຶນຄຸ້ມຄອງໄພພິບັດຂັ້ນຂອງຕົນ, ເຂົ້າໃນການປ້ອງກັນ ແລະ ຄຸ້ມຄອງໄພພິບັດ;
4. ແຕ່ງຕັ້ງໜ່ວຍງານສະເພາະກິດຂຶ້ນ ເພື່ອຮັບມືກັບໄພພິບັດທີ່ເກີດຂຶ້ນ ຫຼື ອາດຈະເກີດຂຶ້ນ;
5. ປຸກລະດົມກໍາລັງແຮງທາງດ້ານວັດຖຸ, ແລະ ເຕັກນິກວິຊາການ ຈາກທົ່ວສັງຄົມ ທັງພາຍໃນ ແລະ ຕ່າງປະເທດ, ລະດົມທຶນດ້ວຍວິທີການຕ່າງໆ ທີ່ບໍ່ຂັດກັບລັດຖະທໍາມະນູນ ແລະ ກົດໝາຍ ເພື່ອຮັບໃຊ້ວຽກງານຄຸ້ມຄອງໄພພິບັດ;

6. ລາຍງານປະຈຳເດືອນ, ປະຈຳ 3 ເດືອນ, ປະຈຳ 6 ເດືອນ, ປະຈຳ 1 ປີ ຕໍ່ທ່ານເຈົ້າຄອງນະຄອນຫຼວງວຽງຈັນ ແລະ ຕໍ່ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນສູນກາງ, ເປີດກອງປະຊຸມປະຈຳປີ ເພື່ອສະຫຼຸບຕີລາຄາແລະ ຖອດຖອນບົດຮຽນກ່ຽວກັບວຽກງານຄຸ້ມຄອງໄພພິບັດ, ຢ່າງເປັນປົກກະຕິ, ໃນກໍລະນີມີເຫດໄພພິບັດ ສຸກເສີນກໍ່ສາມາດເປີດກອງປະຊຸມວິສາມັນ ເພື່ອປຶກສາຫາລື ແລະ ຄົ້ນຄ້ວາ ແກ້ໄຂບັນຫາ, ພ້ອມທັງແຈ້ງເຕືອນໄພພິບັດໃນຂັ້ນຄວາມຮັບຜິດຊອບຂອງຕົນ;
7. ເຄື່ອນໄຫວແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ ກ່ຽວກັບວຽກງານຄຸ້ມຄອງໄພພິບັດຢູ່ພາຍໃນ ແລະ ພົວພັນຮ່ວມມືກັບຕ່າງປະເທດ, ອົງການຈັດຕັ້ງສາກົນ ເພື່ອແລກປ່ຽນບົດຮຽນ, ດ້ານຂໍ້ມູນຂ່າວສານ, ທາງດ້ານເຕັກນິກວິຊາການ, ຍາດແຍ່ງການຊ່ວຍເຫຼືອ ແລະ ທຶນຮອນເຂົ້າໃນວຽກງານຄຸ້ມຄອງໄພພິບັດຂັ້ນຂອງຕົນ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 13 ໜ້າທີ່ ຂອງຄະນະກຳມະການປ້ອງກັນ ແລະ ຄຸ້ມຄອງໄພພິບັດ ນະຄອນຫຼວງວຽງຈັນ**

ຄະນະກຳມະການປ້ອງກັນ ແລະ ຄຸ້ມຄອງໄພພິບັດ ຂັ້ນນະຄອນຫຼວງວຽງຈັນ ມີໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ, ນິຕິກຳ, ແຜນງານ, ແຜນການ ແລະ ໂຄງການກ່ຽວກັບວຽກງານຄຸ້ມຄອງໄພພິບັດ;
2. ຄົ້ນຄວ້າ, ເຊື່ອມຊຶມ ເນື້ອໃນບັນດາສັນຍາ, ອະນຸສັນຍາ, ຍຸດທະສາດ ແລະ ແຜນປະຕິບັດງານ ສາກົນຕ່າງໆ ທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງໄພພິບັດ ທີ່ ສປປ ລາວ ເປັນພາຄີ ເປັນຕົ້ນ ສັນຍາອາຊຽນ ວ່າດ້ວຍການຄຸ້ມຄອງໄພພິບັດ ແລະ ການຕອບໂຕ້ຕໍ່ເຫດການສຸກເສີນ, ແຜນປະຕິບັດງານເຊັນໃດ ວ່າດ້ວຍການຫຼຸດຜ່ອນຄວາມສ່ຽງໄພພິບັດ;
3. ປະກອບຄຳເຫັນໃສ່ນະໂຍບາຍ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ;
4. ຄົ້ນຄວ້າ, ສ້າງ, ປັບປຸງ ແຜນງານ, ແຜນການ, ໂຄງການ ແລະ ງົບປະມານ ກ່ຽວກັບວຽກງານຄຸ້ມຄອງໄພ ພິບັດ ໃຫ້ສອດຄ່ອງກັບສະພາບຕົວຈິງ ຂອງທ້ອງຖິ່ນຕົນ ໃນແຕ່ລະໄລຍະ;
5. ໂຄສະນາ, ເຜີຍແຜ່ນະໂຍບາຍ, ກົດໝາຍ, ລະບຽບການ, ແຜນຍຸດທະສາດ, ແຜນງານ, ແຜນການ ແລະ ໂຄງການ, ສະໜອງຂໍ້ມູນຂ່າວສານ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ ໃຫ້ປະຊາຊົນ, ພາກສ່ວນຕ່າງໆ ຢູ່ໃນນະຄອນຫຼວງວຽງຈັນ ຮັບຮູ້, ເຂົ້າໃຈ, ມີສະຕິ ແລະ ໃຫ້ການຮ່ວມມື ສະໜັບສະໜູນ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວຢ່າງກວ້າງຂວາງ;
6. ໂຄສະນາປູກຈິດສຳນຶກໃຫ້ແກ່ທຸກຊັ້ນຄົນໃນສັງຄົມ ມີຄວາມເຂົ້າໃຈຕໍ່ໄພອັນຕະລາຍ, ຄວາມສ່ຽງ ແລະ ຜົນຮ້າຍຂອງໄພພິບັດ ແລະ ປະກອບສ່ວນເຂົ້າໃນວຽກງານຄຸ້ມຄອງໄພພິບັດ;
7. ສ້າງລະບົບຖານຂໍ້ມູນ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ ເພື່ອນຳໃຊ້ເຂົ້າໃນການສຶກສາ, ຄົ້ນຄວ້າ, ວາງນະໂຍບາຍ, ແຜນການ ແລະ ມາດຕະການແກ້ໄຂ ຢ່າງເໝາະສົມ;
8. ລາຍງານສະພາບຜົນເສຍຫາຍ ແລະ ຄວາມຕ້ອງການຊ່ວຍເຫຼືອທັງໄລຍະສຸກເສີນ ແລະ ຟື້ນຟູຫຼັງໄພພິບັດ ໃຫ້ແກ່ ຄະນະກຳມະການປ້ອງກັນ ແລະ ຄຸ້ມຄອງໄພພິບັດຂັ້ນສູນກາງ, ເຈົ້າຄອງນະຄອນຫຼວງວຽງຈັນ ເພື່ອພິຈາລະນາ ຊີ້ນຳແກ້ໄຂໃຫ້ທັນກັບສະພາບການ;

9. ຊີ້ນຳຈັດຕັ້ງປະຕິບັດແຜນການ, ມາດຕະການ, ເຕັກນິກວິຊາການຕ່າງໆ ໃນການປ້ອງກັນ, ຄຸ້ມຄອງ ແລະ ຟື້ນຟູຫຼັງໄພພິບັດ ໃຫ້ຄືນສູ່ສະພາບປົກກະຕິໂດຍໄວ;
10. ຈັດ ແລະ ເຂົ້າຮ່ວມກອງປະຊຸມ, ສຳມະນາ, ຝຶກອົບຮົມ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການເຊື້ອເຊີນ ແລະ ການອະນຸມັດຂອງຂັ້ນເທິງ,
11. ຕິດຕາມ, ກວດກາ, ປະເມີນຜົນ ກ່ຽວກັບ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງໄພພິບັດ ຢູ່ນະຄອນຫຼວງວຽງຈັນ ໃນແຕ່ລະໄລຍະ ເພື່ອລາຍງານໃຫ້ແກ່ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນສູນກາງ, ເຈົ້າຄອງ ນະຄອນຫຼວງວຽງຈັນ ຢ່າງເປັນປົກກະຕິ ແລະ ທັນເວລາ;
12. ປະສານງານກັບຄະນະກຳມະການປ້ອງກັນ ແລະ ຄຸ້ມຄອງໄພພິບັດຂັ້ນສູນກາງ ເພື່ອໃຫ້ການຊ່ວຍເຫຼືອສຸກເສີນທັນກັບສະພາບການ;
13. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 14 ກອງເລຂາຂອງຄະນະກຳມະການປ້ອງກັນ ແລະ ຄຸ້ມຄອງໄພພິບັດ ນະຄອນຫຼວງວຽງຈັນ**

ກອງເລຂາຂອງຄະນະກຳມະການປ້ອງກັນ ແລະ ຄຸ້ມຄອງໄພພິບັດ ຂັ້ນນະຄອນຫຼວງວຽງຈັນ ປະກອບດ້ວຍ:

1. ຮອງຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມ ນະຄອນຫຼວງວຽງຈັນ ເປັນຫົວໜ້າ;
2. ຫົວໜ້າຂະແໜງສັງຄົມສົງເຄາະ ພະແນກແຮງງານ ແລະ ສະຫວັດດີການສັງຄົມ ນະຄອນຫຼວງວຽງຈັນ ເປັນຮອງ;
3. ຫົວໜ້າຂະແໜງບໍລິຫານ ກອງບັນຊາການທະຫານ ນະຄອນຫຼວງວຽງຈັນ ເປັນຮອງ;
4. ຫົວໜ້າຂະແໜງງົບປະມານແຫ່ງລັດ ພະແນກການເງິນ ນະຄອນຫຼວງວຽງຈັນ ເປັນຮອງ;
5. ຮອງຫົວໜ້າກອງບັນຊາການ ປ້ອງກັນຄວາມສະຫງົບ ນວ (ຜູ້ຊີ້ນຳວຽກງານພາລາ) ເປັນກຳມະການ;
6. ຫົວໜ້າຂະແໜງແຜນການ ພະແນກແຜນການ ແລະ ການລົງທຶນ ເປັນກຳມະການ;
7. ຫົວໜ້າຂະແໜງກໍ່ສ້າງຮາກຖານ ຫ້ອງວ່າການ ນະຄອນຫຼວງວຽງຈັນ ເປັນກຳມະການ;
8. ຫົວໜ້າຂະແໜງບໍລິຫານ, ແຜນການ ແລະ ການເງິນ ພະແນກສາທາລະນະສຸກ ນະຄອນຫຼວງວຽງຈັນ ເປັນກຳມະການ;
9. ຫົວໜ້າຂະແໜງບໍລິຫານ ແລະ ຈັດຕັ້ງ ພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ ເປັນກຳມະການ;
10. ຫົວໜ້າຂະແໜງບໍລິຫານພະແນກໂຍທາທິການ ແລະ ຂົນສົ່ງນະຄອນຫຼວງວຽງຈັນ ເປັນກຳມະການ;
11. ຫົວໜ້າຂະແໜງບໍລິຫານພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງວຽງຈັນ ເປັນກຳມະການ;
12. ຫົວໜ້າຂະແໜງບໍລິຫານພະແນກຖະແຫຼງຂ່າວ, ວັດທະນະທຳແລະການທ່ອງທ່ຽວ ນະຄອນຫຼວງວຽງຈັນ ເປັນກຳມະການ;
13. ຫົວໜ້າຂະແໜງຄຸ້ມຄອງເອກະສານ, ແຂ່ງຂັນແລະການຍ້ອງຍໍພະແນກພາຍໃນນະຄອນຫຼວງວຽງຈັນ ເປັນກຳມະການ;
14. ຫົວໜ້າຂະແໜງບໍລິຫານ, ຈັດຕັ້ງ, ກວດກາພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ເປັນກຳມະການ;
15. ຫົວໜ້າຂະແໜງບໍລິຫານ ຄະນະບໍລິຫານງານຊາວໜຸ່ມ ນະຄອນຫຼວງວຽງຈັນ ເປັນກຳມະການ;

16. ຫົວໜ້າຂະແໜງບໍລິຫານ ສະຫະພັນກຳມະບານ ນະຄອນຫຼວງວຽງຈັນ ເປັນກຳມະການ;

17. ຫົວໜ້າຂະແໜງບໍລິຫານ ສະຫະພັນແມ່ຍິງ ນະຄອນຫຼວງວຽງຈັນ ເປັນກຳມະການ;

18. ຫົວໜ້າຂະແໜງບໍລິຫານຫ້ອງການຄຸ້ມຄອງ ແລະ ບໍລິຫານຕົວເມືອງ ນະຄອນຫຼວງວຽງຈັນ ເປັນກຳມະການ;

19. ຫົວໜ້າຂະແໜງບໍລິຫານ ພະແນກພະລັງງານ ແລະ ບໍ່ແຮ່ ນະຄອນຫຼວງວຽງຈັນ ເປັນກຳມະການ;

20. ຫົວໜ້າຂະແໜງບໍລິຫານພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ນະຄອນຫຼວງວຽງຈັນ ເປັນກຳມະການ;

ກອງເລຂາຂອງຄະນະກຳມະການປ້ອງກັນ ແລະ ຄຸ້ມຄອງໄພພິບັດ ຂັ້ນນະຄອນຫຼວງວຽງຈັນ ຖືກແຕ່ງຕັ້ງ ໂດຍທ່ານຮອງເຈົ້າຄອງນະຄອນຫຼວງວຽງຈັນ ແລະ ມີຄວາມຮັບຜິດຊອບໂດຍກົງຕໍ່ຄະນະກຳມະປ້ອງກັນ ແລະ ຄຸ້ມຄອງໄພພິບັດ ຂັ້ນນະຄອນຫຼວງວຽງຈັນ.

**ມາດຕາ 15 ສິດ ແລະ ໜ້າທີ່ຂອງກອງເລຂາ ຄະນະກຳມະການປ້ອງກັນ ແລະ ຄຸ້ມຄອງໄພພິບັດ ນະຄອນຫຼວງວຽງຈັນ**

ກອງເລຂາ ຄະນະກຳມະການປ້ອງກັນ ແລະ ຄຸ້ມຄອງໄພພິບັດ ຂັ້ນນະຄອນຫຼວງວຽງຈັນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄ້ວາ ສັງລວມ ແລະ ສະເໜີແຜນການ ລວມທັງມາດຕະການປ້ອງກັນ ແລະ ຄຸ້ມຄອງໄພພິບັດໃນແຕ່ລະປີ ຕໍ່ຄະນະກຳມະການ ຂັ້ນນະຄອນຫຼວງວຽງຈັນ ເພື່ອພິຈາລະນາຮັບຮອງ;
2. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ທັງຢູ່ ສູນກາງ ແລະ ທ້ອງຖິ່ນ ເພື່ອສັງລວມລາຍງານຄວາມເສຍຫາຍ ແລະ ຄວາມຕ້ອງການຮີບດ່ວນສຸກເສີນ ພ້ອມທັງສະເໜີແຜນການປະຕິບັດໃຫ້ການຊ່ວຍເຫຼືອ ຕອບໂຕ້ ແລະ ບັນເທົາທຸກສຸກເສີນ ຂອງຜູ້ປະສົບໄພພິບັດ ຕໍ່ຄະນະກຳມະການປ້ອງກັນ ແລະ ຄຸ້ມຄອງໄພພິບັດ ຂັ້ນນະຄອນຫຼວງວຽງຈັນ;
3. ເກັບກຳ, ສັງລວມ ແລະ ຮັກສາຂໍ້ມູນ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ ແລະ ກະກຽມກອງປະຊຸມຄະນະກຳມະການປ້ອງກັນ ແລະ ຄຸ້ມຄອງໄພພິບັດ ຂັ້ນນະຄອນຫຼວງວຽງຈັນ;
4. ເຂົ້າຮ່ວມກອງປະຊຸມ ສຳມະນາ, ຝຶກອົບຮົມທັງພາຍໃນ ແລະ ຕ່າງປະເທດຕາມການເຊື້ອເຊີນ;
5. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານ ກ່ຽວກັບການປ້ອງກັນ ແລະ ຄຸ້ມຄອງໄພພິບັດຕໍ່ ຄະນະກຳມະການປ້ອງກັນ ແລະ ຄຸ້ມຄອງໄພພິບັດ ຂັ້ນນະຄອນຫຼວງວຽງຈັນ, ປະຈຳ 3 ເດືອນ, 6 ເດືອນ, 9 ເດືອນ, 1 ປີ ຢ່າງເປັນປົກກະຕິ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

## ໝວດທີ 4
## ການຄຸ້ມຄອງບໍລິຫານ ກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ

**ມາດຕາ 16 ທີ່ຕັ້ງຂອງ ກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ**

ກອງທຶນຄຸ້ມຄອງໄພພິບັດ ນະຄອນຫຼວງວຽງຈັນ ຕັ້ງຢູ່ພະແນກແຮງງານ ແລະ ສະຫວັດດີການສັງຄົມ ນະຄອນຫຼວງວຽງຈັນ, ເຊິ່ງປະກອບດ້ວຍ:

1. ຄະນະກຳມະການຄຸ້ມຄອງກອງທຶນໄພພິບັດນະຄອນຫຼວງວຽງຈັນ

2. ກອງເລຂາກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ

**ມາດຕາ 17 ຄະນະກຳມະການຄຸ້ມຄອງກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ**

ຄະນະກຳມະການຄຸ້ມຄອງກອງທຶນຄຸ້ມຄອງໄພພິບັດ ນະຄອນຫຼວງວຽງຈັນ ແມ່ນການຈັດຕັ້ງໜຶ່ງ ຮັບຜິດຊອບເຄື່ອນໄຫວວຽກງານ ກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ, ປະກອບດ້ວຍ, ປະທານ, ຮອງປະທານ ແລະ ກຳມະການຈຳນວນໜຶ່ງ ທີ່ມາຈາກຂະແໜງການທີ່ກ່ຽວຂ້ອງ ຊຶ່ງຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງໂດຍປະທານຄະນະກຳມະການປ້ອງກັນ ແລະ ຄຸ້ມຄອງໄພພິບັດ ນະຄອນຫຼວງວຽງຈັນ. ຄະນະກຳມະການຄຸ້ມຄອງ ກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ ມີອາຍຸການ ຫ້າ ປີ.

**ມາດຕາ 18 ໂຄງປະກອບບຸກຄະລາກອນ ຂອງຄະນະກຳມະການຄຸ້ມຄອງກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ**

ຄະນະກຳມະການຄຸ້ມຄອງກອງທຶນຄຸ້ມຄອງໄພພິບັດ ນະຄອນຫຼວງວຽງຈັນ ປະກອບດ້ວຍ:

1. ຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມນະຄອນຫຼວງວຽງຈັນ ເປັນປະທານ;
2. ຮອງຫົວໜ້າຫ້ອງວ່າການ ນະຄອນຫຼວງວຽງຈັນ ເປັນຮອງ;
3. ຮອງຫົວໜ້າພະແນກການເງິນ ນະຄອນຫຼວງວຽງຈັນ ເປັນຮອງ;
4. ຮອງຫົວໜ້າພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ ເປັນກຳມະການ;
5. ຮອງຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມ ນະຄອນຫຼວງວຽງຈັນ ເປັນກຳມະການ;
6. ຫົວໜ້າຂະແໜງສັງຄົມສົງເຄາະ ພະແນກແຮງງານ ແລະ ສະຫວັດດີການສັງຄົມ ນະຄອນຫຼວງວຽງຈັນ ເປັນກຳມະການ;

**ມາດຕາ 19 ສິດ ແລະ ໜ້າທີ່ ຂອງຄະນະກຳມະການຄຸ້ມຄອງກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ**

ຄະນະກຳມະການຄຸ້ມຄອງກອງທຶນຄຸ້ມຄອງໄພພິບັດ ນະຄອນຫຼວງວຽງຈັນ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄຸ້ມຄອງບໍລິຫານ ກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ວ່າດ້ວຍກອງທຶນຄຸ້ມຄອງໄພພິບັດ ນະຄອນຫຼວງວຽງຈັນ, ລະບຽບການຂອງ ກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ;
2. ພິຈາລະນາຮັບຮອງເອົາແຜນການ ແລະ ແຜນງົບປະມານ ການເຄື່ອນໄຫວປະຈຳປີຂອງ ກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ ເພື່ອນຳສະເໜີຕໍ່ຄະນະກຳມະການປ້ອງກັນ ແລະ ຄຸ້ມຄອງໄພພິບັດ ນະຄອນຫຼວງວຽງຈັນ ຕົກລົງ ແລະ ຮັບຮອງເອົາ;
3. ຄົ້ນຄວ້າ ແລະ ສ້າງລະບຽບການ, ເພື່ອສະເໜີຄະນະກຳມະການປ້ອງກັນ ແລະ ຄຸ້ມຄອງໄພພິບັດຮັບຮອງ;
4. ສະເໜີແຕ່ງຕັ້ງ ຫຼື ປົດຕຳແໜ່ງ ບຸກຄະລາກອນຂອງກອງເລຂາ ກອງທຶນຄຸ້ມຄອງໄພພິບັດ ນະຄອນຫຼວງວຽງຈັນ;
5. ຕິດຕາມ ກວດກາ, ຄຸ້ມຄອງການນຳໃຊ້ງົບປະມານໃຫ້ສອດຄ່ອງກັບເປົ້າໝາຍ, ຕາມແຜນການ, ໃຫ້ມີຄວາມໂປ່ງໃສ, ມີປະສິດທິພາບ ແລະ ມີປະສິດທິຜົນ;
6. ຄຸ້ມຄອງລາຍຮັບ-ລາຍຈ່າຍ ຕາມລະບຽບການງົບປະມານໃນວຽກງານຄຸ້ມຄອງໄພພິບັດ;
7. ສະຫຼຸບ, ລາຍງານສະພາບການເຄື່ອນໄຫວວຽກງານຮອບດ້ານຂອງກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ ໃຫ້ຄະນະກຳມະການປ້ອງກັນ ແລະ ຄຸ້ມຄອງໄພພິບັດ ນະຄອນຫຼວງວຽງຈັນ ທຸກໆສາມເດືອນ, ຫົກເດືອນ ແລະ ໜຶ່ງປີ;

8. ຮັບຮອງບົດລາຍງານຜົນການກວດສອບດ້ານການເງິນຂອງກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນໆ ຕາມກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 20 ກອງປະຊຸມຂອງຄະນະກຳມະການຄຸ້ມຄອງກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ**

ກອງປະຊຸມສາມັນຂອງຄະນະກຳມະການຄຸ້ມຄອງ ກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ ເປີດຂຶ້ນປີລະສອງຄັ້ງ ໃນກໍລະນີມີບັນຫາສຳຄັນທີ່ຕ້ອງໄດ້ປຶກສາຫາລື ແລະ ພິຈາລະນາຕົກລົງດ່ວນ ກໍສາມາດເປີດກອງປະຊຸມວິສາມັນຂຶ້ນໄດ້ທຸກເວລາ ຕາມການຮຽກປະຊຸມຂອງປະທານຄະນະກຳມະການຄຸ້ມຄອງກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ, ກອງປະຊຸມຈະເປີດໄດ້ກໍຕໍ່ເມື່ອມີສະມາຊິກຄະນະກຳມະການຄຸ້ມຄອງ ກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ ເຂົ້າຮ່ວມຢ່າງໜ້ອຍ ສອງສ່ວນສາມ ຂອງຈຳນວນສະມາຊິກທັງໝົດ.

**ມາດຕາ 21 ກອງເລຂາ ກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ**

ກອງເລຂາກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ ປະກອບດ້ວຍຮອງຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມ ນະຄອນຫຼວງວຽງຈັນ, ຫົວໜ້າຂະແໜງສັງຄົມສົງເຄາະ ແລະ ພະນັກງານຈາກຂະແໜງການກ່ຽວຂ້ອງ ເຊິ່ງຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍປະທານຄະນະກຳມະການປ້ອງກັນ ແລະ ຄຸ້ມຄອງໄພພິບັດ ນະຄອນຫຼວງວຽງຈັນ ຕາມການສະເໜີຂອງປະທານຄະນະກຳມະການຄຸ້ມຄອງກອງທຶນ ກອງເລຂາຂອງຄະນະກຳມະການຄຸ້ມຄອງກອງທຶນມີອາຍຸການ ຫ້າ ປີ.

**ມາດຕາ 22 ໂຄງປະກອບບຸກຄະລາກອນຂອງກອງເລຂາ ກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ**

ກອງເລຂາບໍລິຫານ ຂອງກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ ປະກອບດ້ວຍ:

1. ຮອງຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມນະຄອນຫຼວງວຽງຈັນ ເປັນຫົວໜ້າ;
2. ຫົວໜ້າຂະແໜງສັງຄົມສົງເຄາະ ພະແນກແຮງງານ ແລະ ສະຫວັດດີການສັງຄົມນະຄອນຫຼວງວຽງຈັນ ເປັນຮອງ;
3. ຫົວໜ້າຂະແໜງງົບປະມານ ພະແນກການເງິນ ນະຄອນຫຼວງວຽງຈັນ ເປັນຮອງ;
4. ຫົວໜ້າຂະແໜງສັງລວມວຽກລັດ ຫ້ອງວ່າການ ນະຄອນຫຼວງວຽງຈັນ ເປັນຄະນະ;
5. ຫົວໜ້າຂະແໜງຈັດຕັ້ງ ແລະ ບໍລິຫານ ພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ ເປັນຄະນະ;

**ມາດຕາ 23 ສິດ ແລະ ໜ້າທີ່ ຂອງກອງເລຂາ**

ກອງເລຂາ ກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຂຶ້ນແຜນງານ, ໂຄງການ ແລະ ແຜນງົບປະມານຮັບໃຊ້ການເຄື່ອນໄຫວວຽກງານເພື່ອສະເໜີຕໍ່ຄະນະກຳມະການຄຸ້ມຄອງກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ ພິຈາລະນາ;
2. ຄຸ້ມຄອງບໍລິຫານການເຄື່ອນໄຫວວຽກງານປະຈຳວັນຂອງກອງທຶນ ໂດຍສອດຄ່ອງກັບແຜນການໃຫ້ມີຄວາມໂປ່ງໃສ, ມີປະສິດທິພາບ ແລະ ມີປະສິດທິຜົນ;
3. ຄຸ້ມຄອງວັດຖຸອຸປະກອນ, ງົບປະມານ ແລະ ບັນຊີເງິນຝາກຂອງ ກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ;

4. ເບີກຈ່າຍງົບປະມານ ແລະ ວັດຖຸອຸປະກອນ ເພື່ອສະໜອງໃຫ້ແກ່ກິດຈະກຳຕ່າງໆຕາມແຜນການຂອງຄະນະກຳມະການຄຸ້ມຄອງກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ ທີ່ໄດ້ຮັບຮອງຈາກຄະນະກຳມະການປ້ອງກັນ ແລະ ຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ;
5. ສະຫຼຸບ ແລະ ລາຍງານສະພາບການເຄື່ອນໄຫວວຽກງານຮອບດ້ານຂອງກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ ໃຫ້ຄະນະກຳມະການຄຸ້ມຄອງກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ ແລະ ຄະນະກຳມະການປ້ອງກັນ ແລະ ຄຸ້ມຄອງໄພພິບັດ ນະຄອນຫຼວງວຽງຈັນ ຢ່າງເປັນປົກກະຕິ 3 ເດືອນ, 6 ເດືອນ ແລະ 1 ປີ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນໆ ຕາມກົດໝາຍ ແລະ ຕາມການມອບໝາຍ.

## ໝວດທີ 5
## ການເປີດບັນຊີ ແລະ ການກວດສອບບັນຊີ

### ມາດຕາ 24 ການເປີດບັນຊີ

ກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ ສາມາດເປີດບັນຊີເງິນຝາກຢູ່ທະນາຄານທຸລະກິດ ທີ່ມີຄວາມໝັ້ນຄົງ, ເຊື່ອຖືໄດ້ ຢູ່ໃນນະຄອນຫຼວງວຽງຈັນ ( ອີງຕາມມາດຕາ 17 ຂອງດຳລັດວ່າດ້ວຍກອງທຶນຄຸ້ມຄອງໄພພິບັດ ສະບັບເລກທີ 631/ລບ, ລົງວັນທີ 24 ທັນວາ 2020) ແລະ ຄັງເງິນແຫ່ງຊາດ ປະຈຳນະຄອນຫຼວງວຽງຈັນ ດັ່ງນີ້:

1. ແຫຼ່ງທຶນທີ່ໄດ້ມາຈາກງົບປະມານຂອງລັດແມ່ນໃຫ້ຝາກໄວ້ຢູ່ຄັງເງິນແຫ່ງຊາດ ປະຈຳນະຄອນຫຼວງວຽງຈັນ;
2. ແຫຼ່ງທຶນທີ່ໄດ້ມາຈາກ ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງທຸກພາກສ່ວນທັງພາຍໃນ ແລະ ຕ່າງປະເທດທີ່ບໍ່ແມ່ນອົງການຈັດຕັ້ງຂອງລັດ ແມ່ນສາມາດເປີດບັນຊີໄວ້ນຳທະນາຄານທຸລະກິດ;

### ມາດຕາ 25 ການກວດສອບບັນຊີ

ບັນຊີກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ ຕ້ອງໄດ້ຮັບການກວດສອບທຸກປີ ໂດຍອົງການກວດສອບປະຈຳພາກພາງ I, ຜົນການກວດສອບ ຕ້ອງລາຍງານ ແລະ ຖືກພິມເຜີຍແຜ່ໃຫ້ຄະນະກຳມະການປ້ອງກັນ ແລະ ຄຸ້ມຄອງໄພພິບັດ ນະຄອນຫຼວງວຽງຈັນ ແລະ ພາກສ່ວນກ່ຽວຂ້ອງຮັບຊາບ.

## ໝວດທີ 6
## ການກວດກາກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ

### ມາດຕາ 26 ການກວດກາກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ

ການກວດກາກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ ແມ່ນການປະເມີນຜົນການນຳໃຊ້ເງິນຂອງກອງທຶນຄຸ້ມຄອງໄພພິບັດ ນະຄອນຫຼວງວຽງຈັນ ເພື່ອຮັບປະກັນຄວາມໂປ່ງໃສ, ມີປະສິດທິພາບ, ມີປະສິດທິຜົນ, ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 27 ອົງການກວດກາວຽກງານກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ

ອົງການກວດກາວຽກງານກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ ປະກອບດ້ວຍ: ສະພາປະຊາຊົນ ນະຄອນຫຼວງວຽງຈັນ, ອົງການກວດສອບປະຈຳພາກພາງ 1, ອົງການກວດກາ ນະຄອນຫຼວງວຽງ-

ຈັນ, ອີງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ການຈັດຕັ້ງທາງສັງຄົມ, ສື່ມວນຊົນ ແລະ ພົນລະເມືອງຕາມພາລະບົດບາດ.

**ມາດຕາ 28 ເນື້ອໃນການກວດກາ:**

ການກວດກາກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນມີເນື້ອໃນດັ່ງນີ້:

1. ການຈັດຕັ້ງປະຕິບັດກິດຈະກຳ, ແຜນການ, ແຜນງານ, ໂຄງການ, ລະບຽບການ ແລະ ນິຕິກຳທີ່ກ່ຽວຂ້ອງກັບກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ;
2. ການເຄື່ອນໄຫວຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງກັບ ກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ ;
3. ລາຍຮັບ-ລາຍຈ່າຍ ການນຳໃຊ້ກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ;
4. ການແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງຕໍ່ກັບກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ ການຈັດຕັ້ງປະຕິບັດວຽກງານຂອງພະນັກງານ ກອງເລຂາ ກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ ແລະ ການປະຕິບັດນະໂຍບາຍຕ່າງໆ.

**ມາດຕາ 29 ຮູບການກວດກາ:**

ຮູບການກວດກາ ກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນມີຮູບການດັ່ງນີ້:

1. ກວດກາຕາມລະບົບປົກກະຕິ ເຊິ່ງແມ່ນການກວດກາທີ່ດຳເນີນໄປຕາມແຜນການເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;
2. ກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ເຊິ່ງແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນໂດຍແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;
3. ກວດກາແບບກະທັນຫັນ ເຊິ່ງແມ່ນການກວດກາຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ, ໃນການດຳເນີນການກວດກາ ເຈົ້າໜ້າທີ່ກວດກາຕ້ອງປະຕິບັດໜ້າທີ່ຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

## ໝວດທີ 7
## ຂໍ້ຫ້າມ

**ມາດຕາ 30 ຂໍ້ຫ້າມທົ່ວໄປ**

**ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳດັ່ງນີ້:**

1. ທຳລາຍ ຫຼື ປ່ຽນແປງ ສະພາບທຳມະຊາດ ແລະ ສິ່ງແວດລ້ອມ ທີ່ຈະພາໃຫ້ເກີດໄພພິບັດ;
2. ສວຍໂອກາດຮັບການບໍລິຈາກ ແລະ ລະດົມທຶນດ້ວຍຮູບການຕ່າງໆ ໂດຍບໍ່ໄດ້ຮັບອະນຸຍາດ;
3. ໃຊ້ຄວາມຮຸນແຮງ, ທຳລາຍສິ່ງຂອງຕ່າງໆ ຂອງຜູ້ປະສົບໄພພິບັດ;
4. ສ້າງອຸປະສັກ, ຂັດຂວາງ, ເມີນເສີຍ ແລະ ບໍ່ໃຫ້ຄວາມຮ່ວມມືໃນວຽກງານຄຸ້ມຄອງໄພພິບັດ;
5. ຍັກຍອກເອົາອຸປະກອນ ແລະ ເຄື່ອງຊ່ວຍເຫຼືອຂອງເຈົ້າໜ້າທີ່ກຳລັງປະຕິບັດໜ້າທີ່ວຽກງານປ້ອງກັນໄພພິບັດ;
6. ເຜີຍແຜ່ລາຍງານ ຫຼື ໃຫ້ຂໍ້ມູນບໍ່ຖືກຕ້ອງຕາມຄວາມເປັນຈິງ;
7. ໃຫ້ ຫຼື ຮັບສິນບົນ, ສໍ້ໂກງຊັບ ຫຼື ຍັກຍອກຊັບຂອງຜູ້ປະສົບໄພພິບັດ;
8. ໂຄສະນາໃສ່ຮ້າຍປ້າຍສີທັບຖົມການຈັດຕັ້ງ ແລະ ພະນັກງານຂອງລັດ;
9. ບໍລິຈາກເຄື່ອງບໍລິໂພກ, ຊັບສິນ ລວມທັງຢາປົວພະຍາດ ທີ່ໝົດອາຍຸການນຳໃຊ້ ແລະ ເຄື່ອງ

ອຸປະໂພກ ທີ່ບໍ່ສາມາດນຳໃຊ້ໄດ້;

10. ສວຍໂອກາດກັກຕຸນ, ຂຶ້ນລາຄາສິນຄ້າ ແລະ ຄ່າຂົນສົ່ງໂດຍສານ;

11. ມີພຶດຕິກຳອື່ນໆ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 31 ຂໍ້ຫ້າມສຳລັບຜູ້ປະສົບໄພ**

**ຫ້າມຜູ້ປະສົບໄພ ມີພຶດຕິກຳດັ່ງນີ້:**

1. ລາຍງານຄວາມເສຍຫາຍຂອງຕົນ ແລະ ຄອບຄົວໂດຍບໍ່ມີມູນຄວາມຈິງ;
2. ໃຫ້ຂໍ້ມູນຂ່າວສານທີ່ບໍ່ຖືກຕ້ອງ, ໃຫ້ຂໍ້ມູນເທັດ ແລະ ປອມແປງເອກະສານ;
3. ທຳລາຍ, ເຄື່ອນຍ້າຍຫຼັກຖານ, ສົມຮູ້ຮ່ວມຄິດກັບພະນັກງານ ຫຼື ເຈົ້າໜ້າທີ່;
4. ບິດເບືອນ, ກ່າວຫາພະນັກງານ, ເຈົ້າໜ້າທີ່ ຫຼື ການຈັດຕັ້ງໂດຍບໍ່ມີມູນຄວາມຈິງ;
5. ຍົກຍ້າຍສິ່ງຂອງ, ບ່ອນຢູ່ອາໄສທີ່ໄດ້ຈັດສັນໃຫ້ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ສ້າງຄວາມຫຍຸ້ງຍາກ ແລະ ຄວາມປັ່ນປ່ວນຢູ່ສະຖານທີ່ພັກເຊົາຊົ່ວຄາວ;
6. ສວຍໂອກາດລັກລອບເອົາວັດຖຸສິ່ງຂອງ, ຊັບສິນຂອງຜູ້ປະສົບໄພພິບັດດ້ວຍກັນ;
7. ລະເມີດແຈ້ງການ ແລະ ຄຳແນະນຳ ຂອງຄະນະກຳມະການປ້ອງກັນ ແລະ ຄຸ້ມຄອງໄພພິບັດ ນະຄອນຫຼວງວຽງຈັນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;
8. ມີພຶດຕິກຳອື່ນໆ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 32 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ຫຼື ພະນັກງານລັດຖະກອນ**

**ຫ້າມເຈົ້າໜ້າທີ່ ຫຼື ພະນັກງານລັດຖະກອນ ມີພຶດຕິກຳ ດັ່ງນີ້:**

1. ສວຍໃຊ້ຕຳແໜ່ງ, ສິດ, ໜ້າທີ່ເພື່ອຍັກຍອກ, ສໍ້ໂກງ, ອຳນວຍຄວາມສະດວກໃຫ້ແກ່ບຸກຄົນ, ຄອບຄົວ ເພື່ອຫາຜົນປະໂຫຍດສ່ວນຕົວ ຫຼື ສ້າງຄວາມເສຍຫາຍແກ່ຜູ້ອື່ນ;
2. ທວງເອົາ, ຂໍເອົາ, ຮັບສິນບົນຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
3. ປະຕິບັດໜ້າທີ່ດ້ວຍຄວາມປະໝາດ, ເລີ່ນເລີ້, ເມີນເສີຍ, ຂາດຄວາມຮັບຜິດຊອບ;
4. ກົດໜ່ວງ, ຖ່ວງດຶງເອກະສານໃຫ້ມີຄວາມລ່າຊ້າ;
5. ຮຽກເອົາ ຄ່າທຳນຽມ, ຄ່າບໍລິການ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
6. ປອມແປງເອກະສານ, ອອກເອກະສານທີ່ບໍ່ຖືກຕ້ອງ ຫຼື ທຳລາຍເອກະສານ;
7. ເປີດເຜີຍຄວາມລັບຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
8. ເພີ່ມ ຫຼື ຫລຸດອັດຕາຄ່າຊ່ວຍເຫຼືອ ນຳໃຊ້ເງິນ ກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ ຕາມລຳພັງໃຈ;
9. ມີພຶດຕິກຳອື່ນໆ ທີ່ເປັນການລະເມີດລະບຽບການ ແລະ ກົດໝາຍ.

## ໝວດທີ 8
## ການຍ້ອງຍໍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 33 ການຍ້ອງຍໍ ຜູ້ທີ່ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ປະກອບສ່ວນຊ່ວຍເຫຼືອທາງດ້ານເຫື່ອແຮງ, ສະຕິປັນຍາ, ວັດຖຸ, ເງິນຄຳ ແລະ ຊັບສິນຕ່າງໆ, ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້, ເຊິ່ງໄດ້ຮັບການຢັ້ງຢືນຈາກພາກສ່ວນທີ່ກ່ຽວຂ້ອງຈະໄດ້ຮັບການຍ້ອງຍໍ ແລະ ປະຕິບັດນະໂຍບາຍຕາມລະບຽບການ.

**ມາດຕາ 34 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຈະຖືກກ່າວເຕືອນ, ສຶກສາອົບຮົມ, ປັບໃໝ ຫຼື ດໍາເນີນຄະດີ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 35 ເຄື່ອງໝາຍ ແລະ ຕາປະທັບ**

ກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ ມີຕາປະທັບເປັນຂອງຕົນເອງ ເພື່ອນໍາໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 36 ການຈັດຕັ້ງປະຕິບັດ**

ມອບໃຫ້ຄະນະກໍາມະການປ້ອງກັນ ແລະ ຄຸ້ມຄອງໄພພິບັດ ນະຄອນຫຼວງວຽງຈັນ, ຄະນະກໍາມະການຄຸ້ມຄອງກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ ແລະ ກອງເລຂາ ກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິຜົນສູງ;

ບັນດາພະແນກການ, ອົງການທຽບເທົ່າ, ບັນດາອົງການປົກຄອງເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນ ພ້ອມດ້ວຍບັນດາທ່ານທີ່ຖືກແຕ່ງຕັ້ງ, ທີ່ເຄື່ອນໄຫວ ແລະ ດໍາລົງຊີວິດຢູ່ນະຄອນຫຼວງວຽງຈັນ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 37 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ 15 ວັນ.

**ເຈົ້າຄອງນະຄອນຫຼວງວຽງຈັນ**

ອາດສະພັງທອງ **ສີພັນດອນ**